## ຄູ່ມືຍາມສຸກເສີນ

# ຈະເຮັດແນວໃດເມື່ອເຈົ້າຕົກຢູ່ໃນເຫດການສຸກເສີນ ຫຼື ບັນຫາຕ່າງໆ

**[ພາສາອັງກິດ]**

ラオス語版

ຮວບຮວມ ແລະ ຈັດພິມໂດຍ:
ກຸ່ມສຶກສາອຳນາດການປົກຄອງທ້ອງຖິ່ນການາກາວາຂອງ
ນະໂຍບາຍແຫ່ງຊາດ, ຕຸລາ 2006

### ຂໍ້ມູນສ່ວນຕົວ

ຊື່: ______________________ ໝວດເລືອດ:___Rh___

ທີ່ຢູ່: ______________________

ວັນເດືອນປີເກີດ: ______________________

ສັນຊາດ: ______________________

ຂ້ອຍສາມາດເວົ້າພາສາ: ______________________

### ຂໍ້ມູນຕິດຕໍ່ທາງຄອບຄົວ

ຊື່: ______________________ ສາຍພົວພັນ: ______________

ເບີໂທ: ______________ ມືຖື: ______________

ອີ-ເມລ໌: ______________________

### ບ່ອນເຮັດວຽກ

ຊື່: ______________________

ບີໂທ: ______________________

ອີ-ເມລ໌: ______________________

---

## ຖ້າເຈົ້າຕ້ອງການລົດໂຮງໝໍ ເມື່ອເຈັບປ່ວຍ ຫຼື ບາດເຈັດ ກະທັນຫັນ:

**ໂທ 1 1 9 .**

- ເມື່ອເຈົ້າເຈັບປ່ວຍກະທັນຫັນ ຫຼື ບາດເຈັບຮ້າຍແຮງ, ໂທຫາສະຖານີດັບເພີງທີ່ເບີ 119 ເພື່ອເອີ້ນລົດໂຮງໝໍ.
- **ເມື່ອສະຖານີດັບເພີງຕອບຮັບແລ້ວ, ບອກເຂົາຕາມລາຍລະອຽດລຸ່ມນີ້:**
  1. **ມັນສຸກເສີນ.**
  2. **ມີຫຍັ່ງເກີດຂື້ນ. (ຕົວຢ່າງ: ການເຈັບປ່ວຍ ຫຼື ບາດເຈັບ)**
  3. **ເຈົ້າຢູ່ໃສ**
  4. **ຊື່ ແລະ ເບີໂທຂອງເຈົ້າ**
- ຖ້າເຈົ້າບໍ່ສາມາດເວົ້າພາສາຍີ່ປຸ່ນໄດ້, ຈົ່ງຂໍຄວາມຊ່ວຍເຫຼືອໃຫ້ຄົນທີ່ຢູ່ອ້ອມຂ້າງເຈົ້າໂທໃຫ້.

---

## ໃນເຫດການໄຟໄໝ້:

## ໃຫ້ຮ້ອງ “ໄຟໄໝ້!” ເພື່ອເຕືອນຄົນອື່ນໆ.

**ໂທ 1 1 9 .**

- **ໃນເຫດການໄຟໄໝ້, ໃຫ້ຮ້ອງຂື້ນ “ໄຟໄໝ້!” ເພື່ອເຕືອນເ.ພື່ອນບ້ານ**
- ໂທຫາສະຖານີດັບເພີງທີ່ເບີ 119 ເພື່ອຂໍເຄື່ອງດັບເພີງ.
- ມັນອັນຕະລາຍທີ່ຈະພະຍາຍາມດັບເພີງດ້ວຍຕົວຂອງທ່ານເອງ.
- **ເມື່ອສະຖານີດັບເພີງຕອບຮັບແລ້ວ, ບອກເຂົາຕາມລາຍລະອຽດລຸ່ມນີ້:**
  1. **ມີໄຟໄໝ້.**
  2. **ສະຖານທີ່ເກີດໄຟໄໝ້, ເຊັ່ນທີ່ຢູ່ ຫຼື ຊື່ຂອງຕຶກ**
  3. **ໄຟໄໝ້ເປັນແນວໃດແລ້ວ.**
  4. **ຈຸດສັງເກດຕ່າງໆທີ່ຢູ່ໃກ້ແຖວນັ້ນ, ຕົວຢ່າງຕຶກ**
  5. **ຊື່ ແລະ ເບີໂທສັບຂອງເຈົ້າ**
- ຖ້າເຈົ້າບໍ່ສາມາດເວົ້າພາສາຍີ່ປຸ່ນໄດ້, ຈົ່ງຂໍຄວາມຊ່ວຍເຫຼືອໃຫ້ຄົນທີ່ຢູ່ອ້ອມຂ້າງເຈົ້າໂທໃຫ້.

---

## ຖ້າຫາເຈົ້າຕົກເປັນເຫຍື່ອຂອງພວກອາດສະຍາກໍາ ຫຼື ຢູ່ໃນອຸບັດເຫດທາງລົດ:

**ໂທ 1 1 0 .**

- ຖ້າເຈົ້າຖືກລັກເຄື່ອງ, ຕົກຢູ່ໃນເຫດການຮຸນແຮງຕ່າງໆ, ຖືກອຸບັດເຫດ, ຫຼື ເຫັນອຸບັດເຫດເກີດຂື້ນ, ໃຫ້ໂທຫາຕໍາຫຼວດທີ່ເບີ 110.
- **ເມື່ອຕໍາຫຼວດຕອບຮັບແລ້ວ, ບອກເຂົາຕາມລາຍລະອຽດລຸ່ມນີ້:**
  1. **ມີຫຍັງເກີດຂື້ນ. (ຕົວຢ່າງ “ມີອຸບັດເຫດເກີດຂື້ນ”)**
  2. **ມັນເກີດຂື້ນເມື່ອໃດ. (ຕົວຢ່າງ “ອຸບັດເຫດຫາກໍ່ກິດຂື້ນ ___ສອງສາມນາທີທີ່ຜ່ານມານີ້.”)**
  3. **ມັນເກີດຂື້ນຢູ່ໃສ. (ຕົວຢາງ : ສະຖານທີ່ ຫຼື ຈຸດສັງເກດທີ່ຢູ່ໃກ້ໆນັ້ນ, ເຊັ່ນຕຶກ)**
  4. **ຮູບປະພັນສັນຖານ, ເສື້ອຜ້າ ແລະ ລັກສະນະລົດຂອງພວກອາດສະຍາກອນ**
  5. **ຊື່ ແລະ ເບີໂທລະສັບຂອງເຈົ້າ**
- ຖ້າເຈົ້າບໍ່ສາມາດເວົ້າພາສາຍີ່ປຸ່ນໄດ້, ຈົ່ງຂໍຄວາມຊ່ວຍເຫຼືອໃຫ້ຄົນທີ່ຢູ່ອ້ອມຂ້າງເຈົ້າໂທໃຫ້.

## 10 ວິທີໃນການປ້ອງກັນເມື່ອເກີດເຫດການແຜ່ນດິນໄຫວ

ແຜ່ນດິນໄຫວເກີດຂື້ນເລື້ອຍໆຢູ່ປະເທດຍີ່ປຸ່ນ.ຫາກຕົກຢູ່ໃນເຫດການແຜ່ນດິນໄຫວ, ກະລຸນາປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້ ເພື່ອປ້ອງກັນບໍ່ໃຫ້ເກີດບາດເຈັບຕ່າງໆ ຫຼື ໄຟໄໝ້.

● **ໃນລະຫວ່າງແຜ່ນດິນໄຫວ**

1. ເມື່ອການສັ່ນໄຫວເກີດຂື້ນ, ປ້ອງກັນຕົວເອງກ່ອນ. ປິດແກັດສ໌ ຫຼື ສິ່ງອື່ນໆທີ່ກໍ່ໃຫ້ເກີດໄຟໄດ້.
2. ລໍຖ້າຈົນກວ່າການສັ່ນໄຫວນັ້ນຈະຜ່ອນລົງ.
3. ຈົ່ງໃຈເຢັນໆ ແລະ ປະຕິບັດຢ່າງລະມັດລະວັງເພື່ອບໍ່ໃຫ້ຕົວຂອງທ່ານຖືກບາດເຈັບຈາກສິ່ງຕ່າງໆ
4. ເປີດປ່ອງຢ້ຽມ ຫຼື ປະຕູເພື່ອຄວາມປອດໄພຂອງຕົວທ່ານເອງ.
5. ຫຼຸ່ມອອກຈາກເຮືອນ ຫຼື ຕຶກຍ້ອນວັດຖຸຕ່າງໆອາດຕົກລົງມາໃສ່
6. ຢູ່ຫ່າງຈາກປະຕູ ຫຼື ຮົ້ວ, ມັນອາດລົ້ມລົງມາທັບເຈົ້າ.

● **ຫຼັງຈາກແຜ່ນດິນໄຫວ**

7. ຮວບຮວມຂໍ້ມູນທີ່ຖືກຕ້ອງຈາກວິທະຍຸ ຫຼື ໂທລະພາບ ແລະ ປະຕິບັດຢ່າງລະມັດລະວັງ.
8. ກວດເບິ່ງໃຫ້ ໝັ້ນໃຈໃນຄວາມປອດໄພຂອງຄອບຄົວທ່ານ ແລະ ເພື່ອນບ້ານ.
9. ປະສານງານກັບບຸກຄົນທີ່ເຮັດວຽກກ່ຽວກັບການຮັກສາຄວາມປອດໄພ ແລະ ການປະຖົມພະຍາບານຂັ້ນພື້ນຖານ.
10. ກ່ອນການອົບພະຍົບ, ຕ້ອງແນ່ໃຈວ່າໄດ້ມອດໄຟ ແລະ ແກັດສ໌.

## ບ່ອນອົບພະຍົບຂອງຄອບຄົວ (ບ່ອນນັດພົບ)

**ຊື່ຂອງບ່ອນອຳນວຍຄວາມສະດວກ:**

**ສະຖານທີ່:**

**ໂທ:**

● ເພື່ອກະກຽມໃນຍາມສຸກເສີນ, ໂອ້ລົມ ແລະ ສ້າງແຜນກັບຄອບຄົວຂອງທ່ານ ກ່ຽວກັບວິທີການຕິດຕໍ່ສື່ສານ, ສະຖານທີ່ນັດພົບ, ແລະ ເສັ້ນທາງທີ່ປອດໄພໃນການອົບພະຍົບ.

## ລາຍການເຄື່ອງທີ່ຈຳເປັນໃນກໍລະນີສຸກເສີນ

**[ເຄື່ອງທີ່ຕ້ອງຖືອອກໄປນຳ]**

**ກະກຽມເຄື່ອງຕ່າງໆດັ່ງລຸ່ມນີ້, ແລະເອົາໃສ່ກະເປົ໋າ, ອື່ນໆອີກໃນ ເລວາອົບພະຍົບ.**

ແກວນ້ຳ, ວິທະຍຸ, ເສື້ອຜ້າ, ເກີບ, ອາຫານ, ໄມ້ຂີດໄຟ ຫຼື ໄຟແຊັກ, ສິ່ງມີຄ່າ, ໄຟສາຍ, ເຄື່ອງປະຖົມພະຍາບານ, ອຸປະກອນເຄື່ອງຂຽນ, ເສື້ອກັນຝົນ, ເສື້ອກັນໜາວ, ເຈ້ຍອະນາໄມ, ແລະ ອື່ນໆທີ່ຈຳເປັນສຳລັບໃຊ້ໃນຊີວິດປະຈຳວັນ

**[ສິ່ງທີ່ຄວນເກັບທ້ອນໄວ້ໃນຍາມສຸກເສີນ]**

**ກະກຽມສິ່ງຕ່າງໆເຫຼົ່ານີ້ເພື່ອຊີວິດການເປັນຢູ່ປະມານ 3 ວັນຫຼັງຈາກ ແຜ່ນດິນໄຫວ.**

ທຽນ, ເຕົາແກັດສ໌ທີ່ສາມາດພົກພາໄດ້, ນ້ຳມັນເຊື້ອເພີງ, ນ້ຳດື່ມ (ບັນຈຸໃສ່ກວດຢາງ, ອື່ນໆ, ປະມານ 3 ລິດຕໍ່ມື້ຕໍ່ຄົນ) ແລະ ອາຫານ

## ການຕິດຕໍ່ກັບສະມາຊິກພາຍໃນຄອບຄົວ

● **ເມື່ອເກີດໄພພິບັດສຸກເສີນສາມາດກົດຂໍ້ຄວາມໄດ້ຕະຫຼອດເວລາ NTT**

| ບັນທຶກຂໍ້ຄວາມ | ຟັງຂໍ້ຄວາມ |
|---|---|
| 171 | 171 |
| ↓ (ຄຳແນະນຳເປັນພາສາຍີ່ປຸ່ນ) ↓ | |
| 1 | 2 |
| ↓ (ຄຳແນະນຳເປັນພາສາຍີ່ປຸ່ນ) ↓ | |

ເບີໂທລະສັບ (ສາຍຕົງ) ຂອງຜູ້ຮັບຜິດຊອບເຂດທີ່ເກີດໄພພິບັດ: (xxx)-xxx-xxxx

↓ (ຄຳແນະນຳເປັນພາສາຍີ່ປຸ່ນ) ↓

| | |
|---|---|
| 1 # | 1 # |
| ↓ (ຄຳແນະນຳເປັນພາສາຍີ່ປຸ່ນ) ↓ | |
| ຝາກຂໍ້ຄວາມ (ພາຍໃນ 30 ວິນາທີ) | ຟັງຂໍ້ຄວາມ |
| ↓ (ຄຳແນະນຳເປັນພາສາຍີ່ປຸ່ນ) ↓ | |
| 9 # | 9 # |
| ↓ (ຄຳແນະນຳເປັນພາສາຍີ່ປຸ່ນ) ↓ | |

ຈົບ

● ບໍລິສັດໂທລະສັບມືຖືຍັງໃຫ້ບໍລິການຂໍ້ຄວາມເຕືອນເມື່ອເກີດໄພພິບັດ ໃນກໍລະນີສກຸກເສີນ.

## ບໍລິການປຶກສາ

ບໍລິການດ້ານພາສາຕ່າງໆ ໂດຍຂຶ້ນກັບສະຖານທີ່ ແລະ ມື້ປະຈຳອາທິດ. ສາມາດໂທເພື່ອສອບຖາມຂໍ້ມູນຕ່າງໆໄດ້ຕື່ມ.

● **ບໍລິການຂອງຫົວໜ້າຫ້ອງການ**

ເປີດແຕ່ວັນຈັນ ເຖິງ ວັນສຸກ ເວລາ 9:00 ຫາ 12:00, & ແຕ່ 13:00 ຫາ 16:00.

ສູນການາກາວ້າ ____ 045 (410) 3131
ສູນບໍລິຫານຫ້ອງການເຄັນ- ໂອ ____ 046 (223) 0709
ສູນກາວາກາສິ ເຄັນມິນ ____ 044 (549) 0047

● **ບໍລິການແປພາສາດ້ານການແພດ**

ບໍລິການຮັບຄຳຮ້ອງແຕ່ວັນຈັນ ເຖິງ ວັນສຸກ ແຕ່ເວລາ 9:00 ຫາ 12:00, & ແຕ່ 13:00 to 16:00.

MIC ການາກາວາ ____ 045 (317) 8803

● **ບໍລິການປຶກສາຂອງເທດສະບານ**

ສະມາຄົມໂຢໂກຮາມາເພື່ອການແລກປ່ຽນການພົວພັນສາກົນ ____ 045 (222) 1209
ສະມາຄົມສາກົນກາວາສາກິ ____ 044 (435) 7000
ສູາມາຄົມສາກົນໂຢໂກສຸກາ ____ 046 (827) 2166
ຫ້ອງການເມືອງຊີຣັດສຸກະ ____ 0463 (21) 8764
ຫ້ອງການເມືອງຟູຈິສະວະ ____ 0466 (25) 1111
ຫໍເມືອງຈິກາຫາກີ
(ການນັດພົບທີ່ຈຳເປັນ) ____ 0467 (82) 1111
ຫ້ອງການເມືອງອັດສຸກິ ____ 046 (225) 2100
ສະມາຄົມສາກົນຢາມາໂຕະ ____ 046 (260) 5126
ຫໍເມືອງສາກາມິຮາຣະ ____ 042 (769) 8319
ຫ້ອງການເມືອງຮາ ____ 0463 (82) 2001
ຫ້ອງການເມືອງຢູກາວາຣາ ____ 0465 (63) 2111
ຫ້ອງການເມືອງອາຍກາວາ ____ 046 (285) 2111